ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳແນະນຳ

## ການສ້າງຍຸດທະສາດ ສຳລັບວຽກງານ
## ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ


ກົມນະໂຍບາຍ ແລະ ນິຕິກຳ

ກະຊວງກະສິກຳ ແລະ ປ່າໄມ້

2021

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0147/ກປ
ນະຄອນຫຼວງວຽງຈັນ, ວັນທີ 01 FEB 2021

# ຂໍ້ຕົກລົງ
## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຄຳແນະນຳ
## ການສ້າງຍຸດທະສາດ ພັດທະນາວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ສະບັບເລກທີ 1013/ກບນ, ລົງວັນທີ 22 ທັນວາ 2020.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 1** ອະນຸມັດ ຮັບຮອງ ແລະ ປະກາດໃຊ້ ຄຳແນະນຳ ການສ້າງຍຸດທະສາດ ພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

**ມາດຕາ 2** ມອບໃຫ້ ກົມນະໂຍບາຍ ແລະ ນິຕິກຳ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຄຳແນະນຳ ການສ້າງຍຸດທະສາດ ພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 1.

**ມາດຕາ 3** ຫ້ອງການ, ບັນດາກົມ, ສະຖາບັນ ແລະ ທຽບເທົ່າ ອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ທ່ານ ລມຕ, ຮລມຕ | 05 ສະບັບ (ເພື່ອລາຍງານ) |
| 2. | ຫ້ອງການກະຊວງ | 01 ສະບັບ (ເພື່ອຊາບ) |
| 3. | ພະແນກເລຂານຸການ ແລະ ພິທີການ | 01 ສະບັບ |
| 4. | ເກັບມ້ຽນ | 01 ສະບັບ |

# ຄຳນຳ

ຍຸດທະສາດມີຄວາມສຳຄັນ ແລະ ສ້າງຂຶ້ນ ເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ບັນລຸເປົ້າໝາຍການພັດທະນາຂອງລັດຖະບານ ເຊິ່ງຈຳເປັນຕ້ອງອີງໃສ່ຫຼັກການ ແລະ ຂັ້ນຕອນທີ່ເໝາະສົມ, ການສ້າງຍຸດທະສາດພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດສ່ວນໃຫຍ່ແມ່ນຕິດພັນກັບຫຼາຍຂະແໜງການ. ດັ່ງນັ້ນ, ທຸກຂະແໜງການທີ່ກ່ຽວຂ້ອງທັງພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງສາກົນຕ້ອງການປະສານສົມທົບ ແລະ ການມີສ່ວນຮ່ວມເພື່ອຮັບປະກັນໃຫ້ສອດຄ່ອງກັບແຜນການຈັດຕັ້ງປະຕິບັດຜັນຂະຫຍາຍທິດທາງ ແລະ ຄາດໝາຍທີ່ວາງໄວ້ໃຫ້ບັນລຸຜົນສຳເລັດຕາມແຜນພັດທະນາເສດຖະກິດ–ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

ເພື່ອເປັນບ່ອນອີງໃນການກະກຽມ, ຮ່າງ ແລະ ນຳສະເໜີພິຈາລະນາຮັບຮອງຍຸດທະສາດຕ່າງໆຂອງຂະແໜງກະສິກຳແລະ ປ່າໄມ້, ກົມນະໂຍບາຍ ແລະ ນິຕິກຳ ຈຶ່ງໄດ້ສ້າງຄຳແນະນຳການສ້າງຍຸດທະສາດພັດທະນາວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. ຄຳແນະນຳສະບັບນີ້ ປະກອບມີ 03 ພາກຄື: (1) ພາກສະເໜີ; (2) ຂັ້ນຕອນການສ້າງຍຸດທະສາດ ແລະ (3) ການມີສ່ວນຮ່ວມຂອງພາກສ່ວນຕ່າງໆ. ໃນຂັ້ນຕອນການສ້າງຍຸດທະສາດແມ່ນເລີ່ມຈາກການກະກຽມແນວຄວາມຄິດດ້ານຍຸດທະສາດ ເພື່ອສະເໜີການນຳກະຊວງກະສິກຳ ແລະ ປ່າໄມ້ ອະນຸມັດຫຼັງຈາກນັ້ນຈຶ່ງໃຫ້ເລີ່ມຮ່າງຍຸດທະສາດຈົນຮອດຂັ້ນຕອນການຂຽນຍຸດທະສາດ, ຈັດກອງປະຊຸມປຶກສາຫາລືກັບພາກສ່ວນກ່ຽວຂ້ອງຈົນເຖິງການຮັບຮອງ ແລະ ປະກາດໃຊ້ຍຸດທະສາດຢ່າງເປັນທາງການ.

ຄຳແນະນຳສະບັບນີ້ສ້າງຂຶ້ນເພື່ອເປັນເອກະສານແນະນຳໃນການຈັດຕັ້ງປະຕິບັດວຽກງານການສ້າງຍຸດທະສາດຂອງຂະແໜງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໃຫ້ແທດເໝາະກັບສະພາບຕົວຈິງ, ເປັນໄປຕາມທິດທາງດຽວກັນ ແລະ ເປັນເອກະພາບໃນຂົງເຂດວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ແລະ ເພື່ອເປັນການຍູ້ໜູນຂະແໜງການອື່ນ. ນອກຈາກນີ້, ຍັງສາມາດນຳໃຊ້ຄຳແນະນຳດັ່ງກ່າວ ເຂົ້າໃນການຝຶກອົບຮົມການສ້າງຄວາມເຂັ້ມແຂງດ້ານຍຸດທະສາດໃຫ້ກັບພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ປ່າໄມ້ ກົມນະໂຍບາຍ ແລະ ນິຕິກຳ

ປອ. ທັດສະກາ ສະພັງທອງ

# ສາລະບານ


ຄຳນຳ.......... i

ສາລະບານ.......... ii

ພາກທີ 1: ພາກສະເໜີ.......... 1

ຈຸດປະສົງ.......... 1

ຄວາມສຳຄັນ.......... 1

ລະດັບຄາດໝາຍ.......... 1

ພາກທີ 2: ຂັ້ນຕອນ ການສ້າງຍຸດທະສາດ.......... 1

ຂັ້ນຕອນທີ 1: ກະກຽມແນວຄວາມຄິດ ດ້ານຍຸດທະສາດ.......... 1

ຂັ້ນຕອນທີ 2: ຂຽນ ຍຸດທະສາດ ສະບັບຮ່າງ.......... 2

ຂັ້ນຕອນທີ 3: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ຍຸດທະສາດ ຂັ້ນສູນກາງ.......... 2

ຂັ້ນຕອນທີ 4: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ຍຸດທະສາດ ຂັ້ນທ້ອງຖິ່ນ.......... 2

ຂັ້ນຕອນທີ 5: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ຍຸດທະສາດ ກັບພາກສ່ວນທີ່ກ່ຽວຂ້ອງ.......... 3

ຂັ້ນຕອນທີ 6: ປັບປຸງ ຮ່າງ ຍຸດທະສາດ ສະບັບສຸດທ້າຍ.......... 3

ຂັ້ນຕອນທີ 7: ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ.......... 3

ພາກທີ 3: ການມີສ່ວນຮ່ວມ ຂອງພາກສ່ວນຕ່າງໆ ແຕ່ລະຂັ້ນຕອນການສ້າງຍຸດທະສາດ.......... 3

ເອກະສານຊ້ອນທ້າຍ 1: ໂຄງຮ່າງ " ແນວຄວາມຄິດ ສຳລັບສ້າງຍຸດທະສາດ ".......... 5

ເອກະສານຊ້ອນທ້າຍ 2: ໂຄງຮ່າງ " ຍຸດທະສາດ ".......... 8

# ພາກທີ 1: ພາກສະເໜີ

### ຈຸດປະສົງ

ຄຳແນະນຳການສ້າງຍຸດທະສາດນີ້ ມີຈຸດປະສົງ ເພື່ອເປັນບ່ອນອີງ ແລະ ແນະນຳວິທີການສ້າງ ຍຸດທະສາດ ໃຫ້ແກ່ຫ້ອງການ,ບັນດາກົມ, ສະຖາບັນ ແລະ ທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ໃຫ້ມີ ຄວາມເປັນເອກະພາບທາງດ້ານຂະບວນການ ແລະ ວິທີການ ໃນການສ້າງຍຸດທະສາດ ເພື່ອຊຸກຍູ້, ສະໜັບສະໜູນ ສຳລັບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

### ຄວາມສຳຄັນ

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໃຫ້ມີຜົນສຳເລັດ ຈຳເປັນຕ້ອງມີຍຸດທະສາດສະໜັບສະໜູນທີ່ເໝາະສົມ. ດັ່ງນັ້ນ, ຈຶ່ງຕ້ອງມີຄຳແນະນຳສະເພາະໃນການສ້າງຍຸດທະສາດໃຫ້ມີຄວາມເປັນເອກະພາບ ໃນຂະແໜງການກະສິກຳ ແລະ ປ່າໄມ້.

### ລະດັບຄາດໝາຍ

ຫ້ອງການ, ບັນດາກົມ, ສະຖາບັນ ແລະ ທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໃຫ້ມີຄວາມເຂົ້າໃຈຢ່າງລະອຽດ ກ່ຽວກັບ ການສ້າງຍຸດທະສາດ ແລະ ສາມາດນຳໄປຈັດຕັ້ງປະຕິບັດ ຕາມໜ້າທີ່ຄວາມຮັບຜິດຊອບ ຂອງຕົນ ໃຫ້ສຳເລັດຢ່າງມີປະສິດທິພາບ. ນອກຈາກນັ້ນ, ຄຳແນະນຳນີ້ ຍັງສາມາດນຳໃຊ້ເປັນເອກະສານ ປະກອບ ແລະ ອ້າງອີງໃນການສອນ ຫຼື ຝຶກອົບຮົມ ກ່ຽວກັບການປັບປຸງຍຸດທະສາດ ໃນວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

# ພາກທີ 2: ຂັ້ນຕອນ ການສ້າງຍຸດທະສາດ

ການສ້າງຍຸດທະສາດ ສຳລັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະກອບມີ 07 ຂັ້ນຕອນ ຄື:

### ຂັ້ນຕອນທີ 1: ກະກຽມແນວຄວາມຄິດ ດ້ານຍຸດທະສາດ

ຫ້ອງການ, ບັນດາກົມ, ສະຖາບັນ ແລະ ທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ຕ້ອງການສ້າງຍຸດທະສາດ ຕ້ອງໄດ້ສະເໜີ ຫົວຂໍ້ ແລະ ແນວຄວາມຄິດ ໂດຍຜ່ານກົມນະໂຍບາຍ ແລະ ນິຕິກຳ ເພື່ອນຳສະເໜີການນຳກະຊວງ ກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດ ໂດຍອີງໃສ່ທິດຊີ້ນຳຈາກຂັ້ນເທິງໃຫ້ຄົ້ນຄວ້າຜັນຂະຫຍາຍໃຫ້ສອດຄ່ອງກັບແນວທາງ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍຜ່ານ

ການສັງລວມຂໍ້ມູນຕ່າງໆ, ຜົນການວິເຄາະ-ວິໄຈ ສະພາບການ ແລະ ຄວາມຕ້ອງການດ້ານຍຸດທະສາດ. ການກະກຽມແນວຄວາມຄິດດ້ານຍຸດທະສາດ ສະເໜີຕາມໂຄງຮ່າງແນວຄວາມຄິດສໍາລັບສ້າງຍຸດທະສາດຢູ່ໃນເອກະສານຊ້ອນທ້າຍ 1.

ຫຼັງຈາກກະກຽມແນວຄວາມຄິດ ດ້ານຍຸດທະສາດ ໃນເບື້ອງຕົ້ນແລ້ວ ໃຫ້ສະເໜີຜ່ານແນວຄວາມຄິດດ້ານຍຸດທະສາດ ຕໍ່ສະພາວິທະຍາສາດເຕັກນິກກະສິກໍາ ແລະ ປ່າໄມ້ ເພື່ອຄົ້ນຄວ້າ ແລະ ປະກອບຄໍາເຫັນໃສ່ແນວຄວາມຄິດດ້ານຍຸດທະສາດດັ່ງກ່າວ.

ໄລຍະເວລາໃນການກະກຽມ ແລະ ອະນຸມັດ ແນວຄວາມຄິດດ້ານຍຸດທະສາດ ແມ່ນຂຶ້ນກັບປະເດັນບັນຫາ, ຖ້າເປັນບັນຫາໃໝ່ ແລະ ຕິດພັນກັບຫຼາຍພາກສ່ວນ ໂດຍໃຊ້ເວລາພາຍໃນ 2 ເດືອນ.

### ຂັ້ນຕອນທີ 2: ຂຽນ ຍຸດທະສາດ ສະບັບຮ່າງ

ຫຼັງຈາກການນໍາກະຊວງກະສິກໍາ ແລະ ປ່າໄມ້ ເຫັນດີອະນຸມັດໃຫ້ມີການຮ່າງເອກະສານດ້ານຍຸດທະສາດ, ພາກສ່ວນກ່ຽວຂ້ອງ ເລີ່ມຕົ້ນຮ່າງເອກະສານຍຸດທະສາດ ໂດຍໃຫ້ຂຽນໄປຕາມໂຄງຮ່າງຍຸດທະສາດ ຢູ່ໃນເອກະສານຊ້ອນທ້າຍ 2. ຖ້າຈໍາເປັນຍັງມີຄວາມຕ້ອງການຂໍ້ມູນເພີ່ມຕື່ມ ຫຼື ຍັງບໍ່ທັນຈະແຈ້ງ ເພື່ອວິເຄາະ-ວິໄຈ ຕ້ອງໄດ້ສັງລວມຂໍ້ມູນ ແລະ ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງຄືນຕື່ມອີກ ທັງໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໂດຍໃຊ້ເວລາພາຍໃນ 3 ເດືອນ.

### ຂັ້ນຕອນທີ 3: ປຶກສາຫາລື ແລະ ປະກອບຄໍາເຫັນໃສ່ ຮ່າງ ຍຸດທະສາດ ຂັ້ນສູນກາງ

ພາຍຫຼັງໄດ້ຮັບ ເອກະສານຍຸດທະສາດ ສະບັບຮ່າງ ຈາກພາກສ່ວນທີ່ຂໍສະເໜີສ້າງຍຸດທະສາດ ກົມນະໂຍບາຍ ແລະ ນິຕິກໍາ ຈະໄດ້ກວດກາ ແລະ ນໍາສະເໜີຮ່າງເອກະສານຍຸດທະສາດນັ້ນໃຫ້ການນໍາກະຊວງກະສິກໍາ ແລະ ປ່າໄມ້ ເພື່ອມີຄໍາເຫັນ ແລະ ພິຈາລະນາ.

ຖ້າເຫັນວ່າມີຄວາມຈໍາເປັນ, ການນໍາກະຊວງກະສິກໍາ ແລະ ປ່າໄມ້ ຈະສະເໜີໃຫ້ຜ່ານຮ່າງເອກະສານຍຸດທະສາດ ຕໍ່ສະພາວິທະຍາສາດເຕັກນິກກະສິກໍາ ແລະ ປ່າໄມ້ ເພື່ອຄົ້ນຄວ້າ ແລະ ປະກອບຄໍາເຫັນໃນຂັ້ນສູນກາງ ໂດຍໃຊ້ເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 4: ປຶກສາຫາລື ແລະ ປະກອບຄໍາເຫັນໃສ່ ຮ່າງ ຍຸດທະສາດ ຂັ້ນທ້ອງຖິ່ນ

ພາຍຫຼັງໄດ້ປຶກສາຫາລືເປັນເອກະພາບຕໍ່ຮ່າງຍຸດທະສາດ ໃນຂັ້ນສູນກາງແລ້ວ ເພື່ອຄວາມເປັນເອກະພາບກັບຂັ້ນທ້ອງຖິ່ນ, ພາກສ່ວນທີ່ສະເໜີສ້າງຍຸດທະສາດ ສົມທົບກັບກົມນະໂຍບາຍ ແລະ ນິຕິກໍາ ນໍາເອົາຮ່າງດັ່ງກ່າວລົງໄປປຶກສາຫາລື ແລະ ປະກອບຄໍາເຫັນ ໃນຂັ້ນທ້ອງຖິ່ນ ໂດຍໃຊ້ເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 5: ປຶກສາຫາລື ແລະ ປະກອບຄຳເຫັນໃສ່ ຮ່າງ ຍຸດທະສາດ ກັບພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ຂໍສະເໜີສ້າງຍຸດທະສາດ ໂດຍສົມທົບກັບກົມນະໂຍບາຍ ແລະ ນິຕິກຳ ດຳເນີນການປຶກສາຫາລື ແລະ ທາບທາມຄຳເຫັນໃສ່ ຮ່າງ ຍຸດທະສາດ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໃນສັງຄົມ ເຊັ່ນ: ຜູ້ຜະລິດ, ພາກສ່ວນທຸລະກິດ, ຜູ້ບໍລິໂພກ, ຄູ່ຮ່ວມພັດທະນາ ແລະ ບັນດາກະຊວງອ້ອມຂ້າງອື່ນໆ ໂດຍໃຊ້ເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 6: ປັບປຸງ ຮ່າງ ຍຸດທະສາດ ສະບັບສຸດທ້າຍ

ຫຼັງຈາກພາກສ່ວນທີ່ຂໍສະເໜີສ້າງຍຸດທະສາດ ປັບປຸງ ຮ່າງເອກະສານຍຸດທະສາດ ມາເປັນສະບັບສຸດທ້າຍ ຕາມຄຳເຫັນຈາກການປຶກສາຫາລືຕ່າງໆ, ກົມນະໂຍບາຍ ແລະ ນິຕິກຳ ກໍ່ຈະໄດ້ກວດກາ ແລະ ນຳສະເໜີຮ່າງເອກະສານຍຸດທະສາດສະບັບສຸດທ້າຍ ໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາອະນຸມັດ ໂດຍໃຊ້ເວລາພາຍໃນ 2 ເດືອນ.

### ຂັ້ນຕອນທີ 7: ຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ

ກະຊວງກະສິກຳ ແລະ ປ່າໄມ້ ນຳສົ່ງເອກະສານຍຸດທະສາດສະບັບສຸດທ້າຍ ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເອົາເຂົ້າວາລະກອງປະຊຸມຄະນະລັດຖະບານ ພິຈາລະນາຮັບຮອງ ແລະ ປະກາດໃຊ້.

ກໍລະນີ ຍຸດທະສາດດັ່ງກ່າວ ຂຶ້ນກັບຄວາມຮັບຜິດຊອບ ຂອງຫຼາຍຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຈະສົ່ງໃຫ້ຄະນະເລຂາທິການສະພາແຫ່ງຊາດ ເອົາເຂົ້າວາລະກອງປະຊຸມສະພາແຫ່ງຊາດ ເພື່ອຮັບຮອງ ຕາມລະບຽບການ.

ໄລຍະເວລາໃນການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດ ຂຶ້ນກັບການກຳນົດ ຂອງລັດຖະບານ ແລະ ສະພາແຫ່ງຊາດ.

ສັງລວມແລ້ວ ໄລຍະເວລາທັງໝົດທີ່ໃຊ້ໃນການສ້າງຍຸດທະສາດ ແມ່ນພາຍໃນ 1 ປີ.

## ພາກທີ 3: ການມີສ່ວນຮ່ວມ ຂອງພາກສ່ວນຕ່າງໆ ແຕ່ລະຂັ້ນຕອນການສ້າງ ຍຸດທະສາດ

ການສ້າງຍຸດທະສາດ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແມ່ນມີຄວາມສັບຊ້ອນ ແລະ ຕິດພັນກັບຫຼາຍຂະແໜງການ. ດັ່ງນັ້ນ, ການສ້າງຍຸດທະສາດ ຈະຕ້ອງມີການປະສານສົມທົບ ແລະ ມີສ່ວນຮ່ວມ ຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງອື່ນໆ ເພື່ອຮັບປະກັນຄວາມສອດຄ່ອງ, ສະໜັບສະໜູນຊຶ່ງກັນ ແລະ ກັນ ໃຫ້ແກ່ການຈັດຕັ້ງປະຕິບັດບັນດາ ຍຸດທະສາດ ໃຫ້ໄປຕາມທິດນຳ ຂອງລັດຖະບານແຫ່ງ ສປປ ລາວ ກໍ່ຄືມະຕິຄຳສັ່ງຕ່າງໆ ຂອງສູນກາງພັກວາງອອກ.

ການມີສ່ວນຮ່ວມ ຂອງພາກສ່ວນກ່ຽວຂ້ອງ ແມ່ນມີຄວາມສຳຄັນຫຼາຍໃນແຕ່ລະຂັ້ນຕອນ ຂອງການສ້າງຍຸດທະສາດ ນັບແຕ່ເລີ່ມຕົ້ນການກຳນົດແນວຄວາມຄິດດ້ານຍຸດທະສາດ ເພື່ອສະເໜີການນຳກະຊວງ ເຫັນດີໃຫ້ດຳເນີນການຂຽນຮ່າງຍຸດທະສາດ ຈົນຮອດຂັ້ນຕອນການຮ່າງ, ປະກອບຄຳເຫັນໃສ່ຮ່າງຍຸດທະສາດ ແລະ ປັບປຸງຮ່າງຍຸດທະສາດເປັນສະບັບສົມບູນ. ແຕ່ລະພາກສ່ວນມີບົດບາດ ແລະ ໜ້າທີ່ແຕກຕ່າງກັນໃນແຕ່ລະຂັ້ນຕອນ ເຊັ່ນ: ຫ້ອງການ, ບັນດາກົມ, ສະຖາບັນອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຈະມີສ່ວນຮ່ວມຕໍ່ຂັ້ນຕອນການສ້າງຍຸດທະສາດ; ສຳລັບການນຳກະຊວງ ຈະມີສ່ວນຮ່ວມໃນໄລຍະເລີ່ມຕົ້ນ ຂອງການໃຫ້ທິດຊີ້ນຳ ໃນການກຳນົດປະເດັນບັນຫາທີ່ຕ້ອງການຍຸດທະສາດ ເພື່ອນຳມາແກ້ໄຂ, ປະກອບຄຳເຫັນ ແລະ ອະນຸມັດຮ່າງຍຸດທະສາດ ເພື່ອສະເໜີການນຳຂັ້ນສູງຕໍ່ໄປ; ສຳລັບພາກສ່ວນ ຊາວກະສິກອນ, ນັກທຸລະກິດ, ຜູ້ບໍລິໂພກ, ຜູ້ໃຫ້ທຶນ ແລະ ອື່ນໆ ຈະມີສ່ວນຮ່ວມໃນຂະບວນການປຶກສາຫາລື ແລະ ປະກອບຄຳຄິດເຫັນ ເພື່ອປັບປຸງຮ່າງຍຸດທະສາດ ໃຫ້ຄົບຖ້ວນສົມບູນ.

## ເອກະສານຊ້ອນທ້າຍ 1: ໂຄງຮ່າງ " ແນວຄວາມຄິດ ສໍາລັບສ້າງຍຸດທະສາດ "

**ຈຸດປະສົງ:** ເພື່ອສະເໜີຂໍທິດຊີ້ນໍາ ແລະ ອະນຸມັດ ກ່ຽວກັບການກະກຽມ ເອກະສານຍຸດທະສາດ

**ສະເໜີໂດຍ:** ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງ ກະຊວງກະສິກໍາ ແລະ ປ່າໄມ້; ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ

**ສົ່ງເຖິງ:** ທ່ານລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້

**ຄວາມຍາວ:** ບໍ່ເກີນ 03 ໜ້າເຈ້ຍ

---

**ໂຄງຮ່າງແນວຄວາມຄິດ:**

1) **ໜ້າປົກ**
   - ກ) **ຊື່ຍຸດທະສາດທີ່ຕ້ອງການສ້າງ:** ກໍານົດຊື່ຍຸດທະສາດ ເປັນປະໂຫຍກສັ້ນໆ ຖ້າເປັນໄປໄດ້ ໃຫ້ໃຊ້ 2–3 ຄໍາເວົ້າ.
     - ຊື່ຕ້ອງຂຽນໃຫ້ສັ້ນ, ກະທັດຮັດ, ອ່ານເຂົ້າໃຈງ່າຍ ແລະ ມີລັກສະນະສະເພາະເຈາະຈົງປະເດັນສໍາຄັນກວມລວມ.
   - ຂ) **ພາກສ່ວນທີ່ສະເໜີ:** ຊື່ ແລະ ທີ່ຢູ່ຕິດຕໍ່ ຂອງຫ້ອງການ, ບັນດາກົມ ແລະ ສະຖາບັນ ອ້ອມຂ້າງ ກະຊວງກະສິກໍາ ແລະ ປ່າໄມ້; ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ສະເໜີຂໍສ້າງຍຸດທະສາດ.

2) **ຄວາມເປັນມາ ແລະ ເຫດຜົນ**
   - ກ) **ຄວາມເປັນມາ ແລະ ບ່ອນອີງ:** ການກໍານົດບັນຫາ, ທ່າແຮງ, ກາລະໂອກາດ ແລະ ທາງເລືອກຕ່າງໆທີ່ກ່ຽວຂ້ອງ ແລະ ຕິດພັນກັບຍຸດທະສາດ ທີ່ຈະສ້າງຂຶ້ນ:
     - ຫຼັກການ ແລະ ບຸລິມະສິດ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການພັດທະນາກະສິກໍາ 2016 - 2020 ແລະ ວິໄສທັດ ຮອດປີ 2030;
     - ແຜນງານບຸລິມະສິດ ຂອງລັດຖະບານ ກໍ່ຄືກະຊວງກະສິກໍາ ແລະ ປ່າໄມ້ ເຊັ່ນ: ແຜນງານຄໍ້າປະກັນສະບຽງອາຫານແຫ່ງຊາດ, ຍຸດທະສາດໂພຊະນາການ 2010-2015 ແລະ ແຜນດໍາເນີນງານໂພຊະນາການ 2016-2020, ແຜນງານຜະລິດເປັນສິນຄ້າ ແລະ ຄໍ້າປະກັນສະບຽງອາຫານ, ແຜນງານຄຸ້ມຄອງປ່າໄມ້ແຫ່ງຊາດ ແລະ ແຜນງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;

- ບັນຫາສຳຄັນທີ່ເກີດໃນແຕ່ລະພາກສ່ວນ ເຊັ່ນ: ດ້ານສິ່ງແວດລ້ອມ, ຄວາມທຸກຍາກ, ການປ່ຽນແປງດິນຟ້າອາກາດ, ບົດບາດຍິງ-ຊາຍ ແລະ ອື່ນໆ;
- ສົນທິສັນຍາສາກົນ ເຊັ່ນ: ເປົ້າໝາຍການພັດທະນາແບບຍືນຍົງ (SDG).

**ຂ) ເຫດຜົນ:** ຍ້ອນຫຍັງຈຶ່ງຈຳເປັນຕ້ອງສ້າງຍຸດທະສາດ ເພື່ອແກ້ໄຂບັນຫາ ແລະ ສະໜັບສະໜູນ?

- ບອກເຫດຜົນ ແລະ ຄວາມຈຳເປັນພື້ນຖານ ສຳລັບສະເໜີສ້າງຍຸດທະສາດ, ການກຳນົດບັນຫາທີ່ຈະຕ້ອງແກ້ໄຂ ຫຼື ການຊຸກຍູ້ສົ່ງເສີມ ແລະ ສະໜັບສະໜູນໃຫ້ຈະແຈ້ງ.

**ຄ) ທິດຊີ້ນຳແນວທາງ ຂອງລັດຖະບານ ກໍຄື ກະຊວງກະສິກຳ ແລະ ປ່າໄມ້ ຜ່ານມາ, ປັດຈຸບັນ ຫຼື ອະນາຄົດ:** ໄດ້ມີການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຫຍັງແດ່ ເພື່ອແກ້ໄຂບັນຫາ ແລະ ສືບຕໍ່ຈັດຕັ້ງປະຕິບັດ ທີ່ຕິດພັນກັບການສ້າງຍຸດທະສາດ.

**ງ) ຂໍ້ຫຍຸ້ງຍາກ ແລະ ຄວາມສ່ຽງ:** ທີ່ຄາດວ່າຈະເກີດຂຶ້ນໃນການພັດທະນາຍຸດທະສາດໃນຕໍ່ໜ້າ.

### 3) ຈຸດປະສົງ ແລະ ຄາດໝາຍຜົນໄດ້ຮັບ ຂອງຍຸດທະສາດ

**ກ) ຈຸດປະສົງ:** ຄວນມີຄວາມກ່ຽວຂ້ອງ ກັບຈຸດປະສົງຂອງຍຸດທະສາດການພັດທະນາໂດຍລວມ ແລະ ບັນດາແຜນງານຂອງກະຊວງກະສິກຳ ແລະ ປ່າໄມ້, ໃນຍຸດທະສາດການພັດທະນາກະສິກຳ ປີ 2025 ແລະ ວິໄສທັດ ຮອດ ປີ 2030, ແຜນງານຄໍ້າປະກັນສະບຽງອາຫານ ແລະ ການຜະລິດກະສິກຳເປັນສິນຄ້າ, ຍຸດທະສາດໂພຊະນາການແຫ່ງຊາດ 2016 ແລະ ແຜນດຳເນີນງານໂພຊະນາການແຫ່ງຊາດ 2016-2020, ແລະ ເອກະສານ/ແຈ້ງການ ທີ່ສຳຄັນຂອງຂະແໜງການ.

**ຂ) ຄາດໝາຍຜົນໄດ້ຮັບ:** ການເພີ່ມຂຶ້ນຂອງສະມັດຕະພາບຜົນຜະລິດເຂົ້າ, ພືດ ແລະ ສັດ, ການສ້າງລາຍຮັບເພີ່ມຂຶ້ນ, ທັງດ້ານປະລິມານ ແລະ ຄຸນນະພາບ, ຄວາມຫຼາກຫຼາຍ ຂອງອາຫານແຕ່ລະປະເພດ, ການຂະຫຍາຍຕົວ ຂອງເນື້ອທີ່, ການນຳໃຊ້ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີ.

### 4) ຜົນປະໂຫຍດ, ຄາດຄະເນຄວາມສ່ຽງ ແລະ ການຈັດຕັ້ງປະຕິບັດ

**ກ) ຜົນປະໂຫຍດ:** ສາມາດຈັດຕັ້ງປະຕິບັດນະໂຍບາຍໃຫ້ມີປະສິດພາບ ແລະ ປະສິດທິຜົນ ເພື່ອຊ່ວຍແກ້ໄຂບັນຫາສະໜັບສະໜູນ ແລະ ສົ່ງເສີມໃຫ້ ຊາວກະສິກອນ, ກຸ່ມຜະລິດ, ຜູ້ປະກອບການ ແລະ ອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນປະໂຫຍດຫຼາຍຂຶ້ນ.

**ຂ) ການຄາດຄະເນຄວາມສ່ຽງ:** ການຈັດຕັ້ງປະຕິບັດຍຸດທະສາດ ອາດຈະມີຄວາມສ່ຽງ ຕໍ່ພາກສ່ວນໃດ? ຜົນກະທົບຫຍັງ? ຍົກຕົວຢ່າງ ແລະ ເຫດຜົນ.

ຄ) **ການຈັດຕັ້ງປະຕິບັດຍຸດທະສາດ**: ຈຳເປັນຕ້ອງຂຽນມາດຕະການໃນການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງ ລວມທັງ ການຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ, ກຳນົດງົບປະມານ, ການສ້າງແຜນ ແລະ ກຳນົດໄລຍະເວລາ.

5) **ຂະບວນການສຳລັບການກະກຽມ ແລະ ຮ່າງເອກະສານຍຸດທະສາດ**

ກ) **ກະກຽມກິດຈະກຳ ແລະ ໄລຍະເວລາ:** ໃຫ້ບອກຂັ້ນຕອນ ແລະ ວິທີການ, ຕົວຊີ້ວັດໄລຍະເວລາ ທີ່ ຕ້ອງການສ້າງຍຸດທະສາດ ຈົນສຳເລັດ ລວມທັງ ຄວາມຕ້ອງການນຳໃຊ້ການຊ່ວຍເຫຼືອທາງດ້ານວິຊາການ ພາກສ່ວນໃດ ພາຍໃນ ຫຼື ສາກົນ?.

- ພາກສ່ວນທີ່ກະກຽມຮ່າງຍຸດທະສາດ ຕ້ອງໄດ້ຜ່ານການເຂົ້າຮ່ວມຝຶກອົບຮົມຈາກກົມນະໂຍບາຍ ແລະ ນິຕິກຳ ໃຫ້ເຂົ້າໃຈ ແລະ ນຳໄປຈັດຕັ້ງປະຕິບັດໄດ້;
- ກໍລະນີຮ່າງຍຸດທະສາດຕິດພັນກັບຫຼາຍພາກສ່ວນ, ພາກສ່ວນທີ່ຮ່າງຍຸດທະສາດ ຕ້ອງໄດ້ສົມທົບກັບກົມນະໂຍບາຍ ແລະ ນິຕິກຳ ເພື່ອຈັດສົ່ງຮ່າງຍຸດທະສາດດັ່ງກ່າວ ໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ປະກອບຄຳເຫັນຕາມໄລະຍະເວລາທີ່ກຳນົດໄວ້ ຈາກນັ້ນກໍນຳມາປັບປຸງໃຫ້ຄົບຖ້ວນສົມບູນ ແລະ ນຳສະເໜີຂັ້ນເທິງພິຈາລະນາອະນຸມັດ.

ຂ) **ກະກຽມງົບປະມານ**: ຕ້ອງຂຶ້ນແຜນງົບປະມານການໃຊ້ຈ່າຍລະອຽດຈະແຈ້ງ ເຊັ່ນ: ແຜນວຽກ, ແຜນຄົນ, ແຜນງົບປະມານ ແລະ ສິ່ງອຳນວຍຄວາມສະດວກອື່ນໆ.

## ເອກະສານຊ້ອນທ້າຍ 2: ໂຄງຮ່າງ " ຍຸດທະສາດ "

---

**ຈຸດປະສົງ:** ເພື່ອຂໍສະເໜີຮັບຮອງ ຍຸດທະສາດ.

**ສະເໜີໂດຍ:** ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງ ກະຊວງ ກະສິກຳ ແລະ ປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ.

**ສົ່ງເຖິງ:** ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮັບຮອງ ຫຼື ສະເໜີຂໍອະນຸມັດຮັບຮອງ ໂດຍລັດຖະບານ.

---

**ເນື້ອໃນຍຸດທະສາດ:**

- **ການຂຽນເນື້ອໃນຍຸດທະສາດ ຄວນເອົາໃຈໃສ່ຫຼັກການລວມ ດັ່ງລຸ່ມນີ້:**
  - ຈັດລຽງຂໍ້ມູນໃຫ້ຊັດເຈນ, ເຂົ້າໃນໂຄງຮ່າງ ຈັດເປັນຫົວຂໍ້ ແລະ ວັກ ໃຫ້ເໝາະສົມ. ສະແດງຂໍ້ມູນຢ່າງເໝາະສົມ, ເລືອກຫົວຂໍ້ຫຼັກ, ຫົວຂໍ້ຍ່ອຍໃຫ້ "ຖືກ" ແລະ ນຳໃຊ້ໝາຍເລກວັກ ແບບງ່າຍດາຍ ເພື່ອຊ່ວຍໃຫ້ຜູ້ອ່ານ ອ່ານງ່າຍ, ເຂົ້າໃຈ ແລະ ສາມາດຊອກຫົວຂໍ້ໃນເອກະສານໄດ້ງ່າຍ;
  - ເພື່ອຊ່ວຍໃຫ້ຜູ້ອ່ານ ສາມາດເຂົ້າໃຈເອກະສານຍຸດທະສາດງ່າຍຂຶ້ນ, ນຳໃຊ້ຮູບພາບ, ເສັ້ນສະແດງ, ແຜ່ນທີ່, ຕາຕະລາງແຜນກິດຈະກຳ ໃສ່ໃນເອກະສານຍຸດທະສາດ ຫຼື ຄັດຕິດໄວ້ໃນເອກະສານຊ້ອນທ້າຍ;
  - ຍຸດທະສາດ ອາດຈະອ້າງອີງເຖິງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ, ດຳລັດ, ຄຳສັ່ງ ແລະ ຄຳແນະນຳ ທີ່ກ່ຽວຂ້ອງ. ພ້ອມກັນນັ້ນ, ກໍ່ອາດຈະກ່ຽວພັນເຖິງ ເອກະສານອື່ນໆ ເຊັ່ນ: ຄຳແນະນຳການຈັດຕັ້ງປະຕິບັດທີ່ດີທີ່ສຸດ. ຖ້າມີການອ້າງອີງເຖິງເອກະສານດັ່ງກ່າວ ໃຫ້ກຳນົດຊ່ອງທາງການເຂົ້າເຖິງເອກະສານເຫຼົ່ານັ້ນ ແລະ ຂຽນລາຍການໃສ່ພາກເອກະສານອ້າງອີງ, ນິຕິກຳທີ່ກ່ຽວຂ້ອງ ໃນເອກະສານຍຸດທະສາດ;
  - ຖ້າຫາກ ເນື້ອໃນຍຸດທະສາດມີຫຼາຍເກີນໄປ ຄວນລະບຸໄວ້ໃນເອກະສານຊ້ອນທ້າຍ ຊຶ່ງອາດຈະເປັນຮູບແບບ ຕາຕະລາງ ຫຼື ເອກະສານ ຄັດຕິດ;
  - ຄວາມຍາວ ແມ່ນຂຶ້ນກັບຄວາມຫຼາກຫຼາຍ ຂອງຫົວຂໍ້ ແລະ ບັນຫາກ່ຽວຂ້ອງ.

- **ຂຽນເນື້ອໃນຍຸດທະສາດ ຕາມໂຄງຮ່າງ ດັ່ງລຸ່ມນີ້.**

**ໜ້າປົກ**

- ໃສ່ຊື່ຍຸດທະສາດ ໃຫ້ເອົາຕາມໂຄງຮ່າງເອກະສານຊ້ອນທ້າຍ 1 ທີ່ການນຳກະຊວງໄດ້ອະນຸມັດແລ້ວ.

- ລະບຸວິໄສທັດ, ເປົ້າໝາຍລວມ, ວັນທີ ທີ່ສ້າງຍຸດທະສາດດັ່ງກ່າວສຳເລັດ ແລະ ປະກາດໃຊ້.

**ນິຕິກຳປະກາດໃຊ້**

- ເອົາດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະກາດໃຊ້ ແລະ ຈັດຕັ້ງປະຕິບັດ ຍຸດທະສາດ ດັ່ງກ່າວ.

**ຄຳນຳ**

- ຂຽນເຖິງສະພາບລວມ, ຄວາມເປັນມາ ແລະ ຈຸດປະສົງ ໃນການສ້າງຍຸດທະສາດ.

**ຄຳຫຍໍ້**

- ຂຽນລາຍການອັກສອນຫຍໍ້ ໂດຍລຽງຕາມລຳດັບອັກສອນ.

**ນິຍາມຄຳສັບ**

- ຂຽນອະທິບາຍຄວາມໝາຍຂອງຄຳສັບທີ່ສຳຄັນ ໃຫ້ຈະແຈ້ງ ແລະ ອ່ານເຂົ້າໃຈງ່າຍ.

**ພາກທີ I ພາກສະເໜີ**

- ສະເໜີສະພາບລວມ ສະຖານະການ, ສິ່ງທ້າທາຍ ແລະ ກາລະໂອກາດ ທີ່ເກີດຂຶ້ນ ໃນຂະແໜງການ.
- ອະທິບາຍຫຍໍ້ ກ່ຽວກັບຈຸດປະສົງໂດຍລວມ ຂອງຍຸດທະສາດ.
- ຍົກໃຫ້ເຫັນເຫດຜົນ ແລະ ຄວາມຕ້ອງການ ທີ່ຈຳເປັນຕ້ອງມີການກຳນົດຍຸດທະສາດ ເພື່ອພັດທະນາ ຂະແໜງການກະສິກຳ ແລະ ປ່າໄມ້.

**ພາກທີ II ຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃນໄລຍະຜ່ານມາ**

1. ຜົນສຳເລັດຂອງການຈັດຕັ້ງປະຕິບັດ

2. ປັດໄຈທີ່ພາໃຫ້ມີຜົນສຳເລັດ

3. ບັນດາຂໍ້ຈຳກັດ, ຂໍ້ຄົງຄ້າງ ແລະ ສາເຫດ

4. ບົດຮຽນ ທີ່ຖອດຖອນໄດ້

5. ສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍ

**ພາກທີ III ທິດນຳ, ວິໄສທັດ, ເປົ້າໝາຍ ແລະ ກອບຍຸດທະສາດ**

1. ທິດນຳ

2. ວິໄສທັດ

3. ເປົ້າໝາຍລວມ

4. ຜົນປະໂຫຍດທີ່ຈະໄດ້ຮັບ

5. ຫຼັກການ

6. ແຜນງານ

**ພາກທີ IV ບັນດາແຜນງານ**

- ລົງເລິກເນື້ອໃນລະອຽດ ຂອງບັນດາແຜນງານບຸລິມະສິດ ແລະ ໂຄງການ/ກິດຈະກຳ ຕົ້ນຕໍ ທີ່ຕ້ອງຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸເປົ້າໝາຍ ແລະ ຈຸດປະສົງ ທີ່ກຳນົດໄວ້ໃນ ຍຸດທະສາດ ດັ່ງກ່າວ.

**ພາກທີ V ມາດຕະການຈັດຕັ້ງປະຕິບັດຍຸດທະສາດ**

1. ມາດຕະການດ້ານນະໂຍບາຍ ແລະ ນິຕິກຳ

2. ມາດຕະການດ້ານການຈັດຕັ້ງ ແລະ ປະສານງານ

3. ມາດຕະການດ້ານການລົງທຶນ

4. ມາດຕະການດ້ານການຕິດຕາມ ແລະ ປະເມີນຜົນ

**ເອກະສານອ້າງອີງ**

- ຂຽນລາຍການເອກະສານ ແລະ ຂໍ້ມູນ ທີ່ນຳໃຊ້ ອ້າງອີງໃນຍຸດທະສາດ.

**ເອກະສານຄັດຕິດ**

- ຄັດຕິດເອກະສານ, ສະຖິຕິ, ຫຼື ຂໍ້ມູນ ທີ່ມີລາຍລະອຽດເພີ່ມເຕີມຈາກບັນດາເອກະສານ ຍຸດທະສາດ.

**ຄະນະສ້າງຄຳແນະນຳ:**

| | | |
|---|---|---|
| 1. | ທ່ານ ປອ. ທັດສະກາ ສະພັງທອງ | ຫົວໜ້າກົມນະໂຍບາຍ ແລະ ນິຕິກຳ |
| 2. | ທ່ານ ຈັນທະບູນ ສອນທະວີ | ຮອງຫົວໜ້າກົມນະໂຍບາຍ ແລະ ນິຕິກຳ |
| 3. | ທ່ານ ປອ. ວົງປະພັນ ມະນີວົງ | ຫົວໜ້າພະແນກນະໂຍບາຍ |
| 4. | ທ່ານ ສົມສະໄໝ ວົງທິລາດ | ຮອງຫົວໜ້າພະແນກນະໂຍບາຍ |
| 5. | ທ່ານ ຈັນໄຊ ຄຳບັນເສືອງ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 6. | ທ່ານ ນາງ ສີສະຫວັນ ວົງລໍຄຳ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 7. | ທ່ານ ນາງ ຈັນສົມ ຄູນສົມບັດ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 8. | ທ່ານ ສຸກສະຫວັນ ແສງດາເຮືອງຮຸ່ງ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 9. | ທ່ານ ສຸລິເອກ ກົ່ງແກ້ວ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 10. | ທ່ານ ນາງ ດາວສຸກສັນ ແກ້ວວົງສາ | ລັດຖະກອນວິຊາການ ພະແນກນະໂຍບາຍ |

**ຮຽບຮຽງ ໂດຍ:** ພະແນກນະໂຍບາຍ, ກົມນະໂຍບາຍ ແລະ ນິຕິກຳ,
ກະຊວງກະສິກຳ ແລະ ປ່າໄມ້

**ຕິດຕໍ່ປະສານງານ:** ພະແນກນະໂຍບາຍ, ກົມນະໂຍບາຍ ແລະ ນິຕິກຳ,
ກະຊວງກະສິກຳ ແລະ ປ່າໄມ້
ໂທຣ: 021 417198
ແຟັກ: 021 417198

**ສະໜັບສະໜູນການຈັດພິມ ໂດຍ:** ອົງການຮ່ວມມືສາກົນແຫ່ງປະເທດ ຍີ່ປຸ່ນ

ການຮ່ວມມື
cooperation
between
MAF - JICA